# Mekong River Commission

P.O. Box 6101, Vientiane 01000, Lao PDR
Telephone: (856-21) 263 263   Facsimile: (856-21) 263 264
Email: mrcs@mrcmekong.org  Website: www.mrcmekong.org

## PRESS RELEASE

**MRC No. 16/08**
*Joint release by MRC and Ministry of Water Resources of the People's Republic of China*

# ສັນຍາວ່າດ້ວຍການສະໜອງຂໍ້ມູນທາງດ້ານອຸທົກກະສາດໄດ້ຕໍ່ອາຍຸຄືນໃໝ່ໂດຍ ສ ປ ຈີນ ແລະ ຄະນະກຳມາທິການແມ່ນ້ຳຂອງ

ວຽງຈັນ, ສປປ ລາວ
**29/08/2008**

ໂດຍອີງຕາມຄວາມສຳພັນທີ່ດີຕໍ່ກັນ ແລະ ທີ່ມີຢູ່ໃນປະຈຸບັນ  ສ ປ ປ ຈີນ ແລະ ບັນດາປະເທດສະມາຊິກ ຄະນະກຳມາທິການແມ່ນ້ຳຂອງ ໄດ້ຕໍ່ສັນຍາເພື່ອແລກປ່ຽນຂໍ້ມູນປະລິມາດການໄຫລ ຂອງແມ່ນ້ຳລ້ານຊ້າງ- ແມ່ນ້ຳຂອງ. ພິທີເຊັນສັນຍາວ່າດ້ວຍການສະໜອງຂໍ້ມູນທາງດ້ານອຸທົກກະສາດ ໄດ້ຈັດຂຶ້ນທີ່ນະຄອນຫລວງວຽງຈັນ ວັນທີ 29 ສິງຫາ 2008 ລະຫວ່າງກະຊວງຊັບພະຍາກອນນ້ຳຂອງ ສ ປ ຈີນ ແລະ ຄະນະກຳມາທິການແມ່ນ້ຳຂອງ. ການເຊັນສັນຍາດັ່ງກ່າວໄດ້ເປັນເຄື່ອງໝາຍເຖິງຜົນສຳເລັດກອງປະຊຸມປຶກສາຫາລື ຄັ້ງທີ 13 ລະຫວ່າງ ຄະນະກຳມາທິການແມ່ນ້ຳຂອງ ແລະ ບັນດາປະເທດຄູ່ເຈລະຈາ ເຊິ່ງແມ່ນ ສ ປ ຈີນ ແລະ ພະມ້າ.

ແມ່ນ້ຳຂອງ ທີ່ເອີ້ນວ່າແມ່ນ້ຳລ້ານຊ້າງ ໃນ ສ ປ ຈີນ ມີຈຸດກຳເນີດມາຈາກ ສ ປ ຈີນ ໄຫລຜ່ານ ປະເທດພະມ້າ, ລາວ, ໄທ, ກຳປູເຈັຍ ແລະ ຫວຽດນາມ. ສະພາບອຸທົກກະໄພທີ່ເກີດຂຶ້ນຕາມທຳມະຊາດໃນລະດູມໍລະສຸມແມ່ນມີຫລາຍຮູບແບບທີ່ແຕກຕ່າງກັນໃນທຸກໆປີ  ໝາຍວ່າ ຂໍ້ມູນປະລິມານນ້ຳຝົນ ແລະ ປະລິມານການໄຫລຂອງນ້ຳໃນອ່າງແມ່ນ້ຳຂອງ ທີ່ຊັດເຈນແມ່ນມີຄວາມຈຳເປັນ ເພື່ອເຮັດໃຫ້ການເຕືອນໄພໃຫ້ແກ່ປະຊາຊົນໃນເຂດທີ່ຈະເກີດມີຜົນກະທົບນັ້ນໃຫ້ທ່ວງທັນກັບເວລາ.

ໃນຖານະທີ່ປັນຄູ່ເຈລະຈາ ຂອງຄະນະກຳມາທິການແມ່ນ້ຳຂອງ, ນັບຕັ້ງແຕ່ ປີ 2002 ເປັນຕົ້ນມາ ສ ປ ຈີນໄດ້ສະໜອງຂໍ້ມູນລະດັບນ້ຳປະຈຳວັນ ແລະ ປະລິມານນ້ຳຝົນຈາກ ສອງສະຖານີອຸທົກກະສາດທີ່ຕັ້ງຢູ່ແມ່ນ້ຳລ້ານຊ້າງ ທີ່ ຢຸນຈິງຫົງ ແລະ ມານອານ ໃນລະດູຝົນ ຈາກວັນທີ 15 ມິຖຸນາ ເຖິງ 15 ຕຸລາ ຂອງທຸກໆປີ. ຂໍ້ມູນດັ່ງກ່າວໄດ້ປັບປຸງຄຸນນະພາບ ຂອງການພະຍາກອນນ້ຳຖ້ວມໃນອ່າງແມ່ນ້ຳຂອງ ແລະ ມີບົດບາດສຳຄັນໃນການຫລຸດຜ່ອນຄວາມເສຍຫາຍ ທີ່ອາດຈະເກີດຂຶ້ນຈາກອຸທົກກະໄພ ໃນບັນດາປະເທດສະມາຊິກ, ຄະນະກຳມາທິການແມ່ນ້ຳຂອງ ກຳປູເຈັຍ, ລາວ, ໄທ ແລະ ຫວຽດນາມ. ຂໍ້ມູນທີ່ໄດ້ຮັບຈາກ ສ ປ ຈີນ ໃນໄລຍະທີ່ເກີດອຸທົກກະໄພໃນ ສ ປ ປ ລາວ ແລະ ໄທ ບໍ່ດົນຜ່ານມານີ້ນັ້ນ ມີຄວາມສຳຄັນຫລາຍແກ່ວຽກງານການກະກຽມຕໍ່ເຫດການສຸກເສີນ ແລະ ການບັນເທົາຄວາມເສຍຫາຍ ຈາກອຸທົກກະໄພໃນສອງປະເທດທີ່ຖືກຜົນກະທົບດັ່ງກ່າວ.

ລາຍລະອຽດເພີ່ມເຕີມ ກະລນາຕິດຕໍ່ພະນັກງານຮັບຜິດຊອບຕິດຕໍ່ພົວພັນ ທ່ານ ເອເດັນ
ໂທ: 856 21 263 263 Ext 4703, ມືຖື: (856) 20 559 9139 ແຟກ: (85621) 263 264
ອີເມວ: aiden@mrcmekong.org